ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃ
MODERN QUICK RELIAB

ສຳນັກງານໃຫຍ່

ເລກທີ: 1074/ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 07 APR 2025

# ໜັງສືແຈ້ງເຊີນ

**ເຖິງ**: ບັນດາທ່ານຫົວໜ້າບໍລິສັດ, ຜູ້ສະໜອງ ທີ່ເປັນຕົວແທນຈຳໜ່າຍປະເພດເຄື່ອງຈັກນັບເງິນ.

**ເລື່ອງ**: ເຊີນເຂົ້າຮ່ວມຍື່ນຊອງລາຄາຈັດຊື້ ເຄື່ອງຈັກນັບເງິນ ແລະ ຈັກມັດໂຄ້ນເງິນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານ ຜູ້ສະໜອງທີ່ມີຄວາມສົນໃຈ ຍື່ນຊອງປະມູນຈັດຊື້ ເຄື່ອງຈັກນັບເງິນ (ຈັກນັບຮ້ອຍ) ຈຳນວນ 18 ໜ່ວຍ (ຕັ້ງໂຕະ 09 ໜ່ວຍ ແລະ ຕັ້ງພື້ນ 09 ໜ່ວຍ) ແລະ ຈັກມັດໂຄ້ນເງິນ ຈຳນວນ 01 ໜ່ວຍ ເພື່ອປະກອບເປັນເຄື່ອງມືຮັບໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ດັ່ງລາຍການລຸ່ມນີ້:

**1.1 ຄວາມສາມາດຂອງເຄື່ອງຈັກນັບເງິນ (ຢ່າງໜ້ອຍ):**

- ລະບົບການນັບເງິນເປັນລະບົບລົມດູດ (Vacuum Feed system).
- ຄວາມໄວໃນການນັບເງິນແມ່ນ ຢ່າງໜ້ອຍ 1.500 ໃບ/ນາທີ.
- ຊ່ອງໃສ່ເງິນສາມາດໃສ່ເງິນໄດ້ເຖິງ 200 ໃບ.
- ຕົວເລກສະແດງຜົນຂະໜາດໃຫຍ່ ດ້ວຍລະບົບດິຈິຕອນ ແບບ LED ເຫັນໄດ້ຢ່າງຊັດເຈນງ່າຍໃນການເບິ່ງ, ສະແດງຜົນລວມສູງເຖິງ 05 ຫຼັກ ແລະ ສະແດງຜົນຈຳນວນໄດ້ 03 ຫຼັກ.
- ສາມາດກຳນົດການເຮັດວຽກຂອງເຄື່ອງໄດ້ທັງລະບົບ Auto ແລະ ລະບົບ Manual.
- ມີສັນຍານເຕືອນເມື່ອມີການນັບຈຳນວນເງິນບໍ່ຖືກຕ້ອງຕາມທີ່ກຳນົດ ແລະ ແຈ້ງຈຳນວນທີ່ບໍ່ຖືກຕ້ອງ.
- ສາມາດນັບເງິນໃໝ່, ເກົ່າ ລວມກັນໄດ້ຢ່າງມີປະສິດທິພາບ.
- ມີສິນຄ້າໃຫ້ ທຄຕລ ທົດລອງຢ່າງໜ້ອຍ 02 ອາທິດ (ຖ້າເປັນລຸ້ນ ທີ່ ທຄຕລ ບໍ່ເຄີຍໄດ້ນຳໃຊ້ມາກ່ອນ).
- ທຄຕລ ຂໍສະຫງວນສິດ ປະຕິເສດກໍລະນີຄວາມສາມາດຂອງເຄື່ອງຈັກບໍ່ຄົບຕາມເງື່ອນໄຂຂ້າງເທິງ.

**1.2 ຄວາມສາມາດຂອງເຄື່ອງມັດໂຄ້ນເງິນ (ຢ່າງໜ້ອຍ):**

- ມີລະບົບ TORQUE TENSION ສຳລັບຕ້ອງການໃຫ້ເຊືອກແໜ້ນ.
- ສາມາດໃຊ້ເຊືອກໄດ້ຫຼາຍຂະໜາດ 5, 6, 9, 12, 15.5 mm.
- ຄວາມໄວໃນການຮັດ 1.5 - 3 ວິນາທີ/ຄັ້ງ.
- ມີສິນຄ້າໃຫ້ ທຄຕລ ທົດລອງຢ່າງໜ້ອຍ 02 ອາທິດ (ຖ້າເປັນລຸ້ນ ທີ່ ທຄຕລ ບໍ່ເຄີຍໄດ້ນຳໃຊ້ມາກ່ອນ).
- ທຄຕລ ຂໍສະຫງວນສິດ ປະຕິເສດກໍລະນີຄວາມສາມາດຂອງເຄື່ອງຈັກບໍ່ຄົບຕາມເງື່ອນໄຂຂ້າງເທິງ.

* **ເງື່ອນໄຂສຳລັບຜູ້ທີ່ສົນໃຈເຂົ້າຮ່ວມປະມູນຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

➤ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງຈັກນັບເງິນ, ຕ້ອງມີວິຊາການກ່ຽວກັບເຄື່ອງຈັກດັ່ງກ່າວໂດຍສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 3 ປີຂຶ້ນໄປ (ສຳເນົາໃບທະບຽນ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈຳປີ 3 ປີ ຍ້ອນຫຼັງ (2021, 2022, 2023) ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.

2. ເອກະສານລາຍລະອຽດສະເປັກສິນຄ້າ, ຍີ່ຫໍ້ເຄື່ອງຈັກ, ການຮັບປະກັນ, ໄລຍະຈັດສົ່ງ, ການຝຶກອົບຮົມການໃຊ້ງານໃຫ້ພະນັກງານ ທຄຕລ, ລະບຸປີຜະລິດ-ປະເທດຜະລິດສິນຄ້າ, ການບຳລຸງຮັກສາ-ການບໍລິການຫຼັງການຂາຍ, ແລະ ເງື່ອນໄຂອື່ນໆຢ່າງລະອຽດຕາມ Format ຄັດຕິດມາພ້ອມນີ້:
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ, ທີ 11/04/2025 ເວລາ 11:00 ໂມງ ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

➢ **ເອກະສານ ຊອງທີ 2 (ປິດຊອງ):**

1. ໃບສະເໜີລາຄາໃຫ້ລວມອາກອນມູນຄ່າເພີ່ມ ພ້ອມທັງລະບຸເປັນສະກຸນເງິນກີບ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຢ່າງໜ້ອຍ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/06/2025) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນພາຍໃນ 10 ວັນ.
3. **ວັນພະຫັດ, ທີ 24/04/2025, ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ, ສະນັ້ນ ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມ 5/2 ອາຄານ C.

- **ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງ ແມ່ນຈະໄດ້ຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ). ການປະມູນຄັ້ງນີ້ແມ່ນຈະພິຈາລະນາເປັນແຕ່ລະລາຍການສິນຄ້າ (ບໍ່ໄດ້ເລືອກຍອດລວມ)
- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
3. ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:

   * ງວດທີ 1: ຊຳລະ 90% ພາຍຫຼັງໄດ້ຮັບສິນຄ້າຖືກຕ້ອງຄົບຖ້ວນ ແລະ ຜ່ານການກວດກາຈາກທັງ 02 ຝ່າຍ ພາຍໃນ 30 ວັນລັດຖະການ.
   * ງວດທີ 2: ຊຳລະ 10% ຂອງມູນຄ່າສັນຍາ ພາຍຫຼັງຮັບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

ຕິດຕໍ່ສອບຖາມ:
ໂທ: 213200 ຕໍ່ 414;
020 5533 4674; 020 5835 1522

## (ຕົວຢ່າງ) ລາຍລະອຽດການປະມູນຈັກ ນັບເງິນ, ຈັກມັດເງິນ

| ລ/ດ | ສະຖານທີ່ | ເງື່ອນໄຂ | | | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2022-24 | ປະສົບການກ່ຽວກັບການສະໜອງຂອງຈັກ (ຈັກປີ) | ເຄີຍສະໜອງຈັກໃຫ້ອົງກອນໃດແນ່ | ໃບອະນຸຍາດເປັນຕົວແທນ | ຍີ່ຫໍ້ສິນຄ້າ | ຄຸນນະພາບສິນຄ້າ | ມີຈໍເສີມ (ມີຫຼືບໍ່?) | ການອັບເດດ Software | ປີ-ປະເທດຜະລິດ | ກຳນົດເວລາສົ່ງ (ຈັກວັນ) | ການບຳລຸງ | |
| 1 | ຈັກນັບເງິນ | | | 7Y | ✓ | ✓ | | | ✓ | | | | ..... ຄັ້ງ/ປີ | |
| 2 | ຈັກມັດເງິນ | | | | | | | | ✓ | | | | ..... ຄັ້ງ/ປີ | |